ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ມະຫາວິທະຍາໄລ ສຸພານຸວົງ

ເລກທີ....126./ມສ

ຫລວງພະບາງ, ວັນທີ 17 ພຶດສະພາ 2021

# ແຈ້ງການດ່ວນທີ່ສຸດ

ເຖິງ : ພະນັກງານ-ອາຈານ ແລະ ນັກສຶກສາ ມະຫາວິທະຍາໄລ ສຸພານຸວົງ

ເລື່ອງ: ສັກວັກຊີນຕ້ານໂຄວິດ 19

- ອີງຕາມ: ໜັງສືແຈ້ງການຂອງຄະນະຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ19 ພະແນກສາທາລະນະສຸກ ແຂວງຫຼວງພະບາງ ລົງວັນທີ 17 /5/2020.
- ອີງຕາມ: ການແນະນຳຂອງທ່ານ ອະທິການບໍດີ ມະຫາວິທະຍາໄລ ສຸພານຸວົງ ລົງວັນທີ 17 ພຶດສະພາ 2021.

ອະທິການບໍດີ ມະຫາວິທະຍາໄລ ສຸພານຸວົງ ຂໍແຈ້ງມາຍັງທ່ານ ຊາບວ່າ: ຄະນະຮັບຜິດຊອບຄວບຄຸມການແຜ່ລະບາດຂອງເຊື້ອພະຍາດໂຄວິດ 19 ຈາກພະແນກສາທາລະນະສຸກແຂວງຫຼວງພະບາງ ຈະໄດ້ລົງມາສັກວັກຊີນຕ້ານໂຄວິດ 19 ໃຫ້ແກ່ພະນັກງານ-ອາຈານ ແລະ ນັກສຶກສາ ທົ່ວ ມະຫາວິທະຍາໄລ ສຸພານຸວົງ (ຜູ້ທີ່ຍັງບໍ່ທັນໄດ້ສັກ) ໃນລະຫວ່າງ ວັນທີ 18-19 ພຶດສະພາ 2021 ເລີ່ມແຕ່ເວລາ 8:00 ເປັນຕົ້ນໄປ ທີ່ສະໂມສອນໃຫຍ່.

- ໝາຍເຫດ:
  1. ພະນັກງານ ແລະ ນັກສຶກສາ ຕ້ອງໃສ່ຜ້າປິດປາກ ແລະ ໃຫ້ນຳບັດປະຈຳຕົວມາພ້ອມ. ສຳລັບນັກສຶກສາຜູ້ທີ່ບໍ່ມີບັດປະຈຳຕົວ ແມ່ນໃຫ້ເອົາບັດນັກສຶກສາມາ.
  2. ມອບໃຫ້ໜ່ວຍງານແພດ ມະຫາວິທະຍາໄລ ສຸພານຸວົງ ຕັ້ງຈຸດກວດວັດອຸນຫະພູມ ທີ່ປະຕູໂຂງ.
  3. ມອບໃຫ້ພະແນກປ້ອງກັນ ຈັດສັນບ່ອນຈອດລົດຂອງພະນັກງານ ແລະ ນັກສຶກສາ ເພື່ອຄວາມເປັນລະບຽບ

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ເຊັນແທນ ອະທິການບໍດີ

ສີອານຸວົງ ສະຫວັດວົງ

สแกนด้วย CamScanner